

# ການຜັນປ່ຽນຕໍ່ມາ: ຂັ້ນຕໍ່ໄປ

## ແມ່ນຫຍັງຈະເກີດຂຶ້ນເມື່ອເວລາ ລູກຂອງຂ້ອຍຮອດອາຍຸສາມປີ?

*ຄຳຊີ້ນຳໄປສູ່ການຜັນປ່ຽນຕໍ່ມາຈາກການບໍລິການເຂົ້າແຊກແຊງແຕ່ເລີ້ມຕົ້ນພາຍໃຕ້ກົດໝາຍການສຶກສາສຳລັບບຸກຄົນຜູ້ທີ່ມີຄວາມເສັຽອົງຄະ (IDEA) ພາກ C.*

ຖືກອອກເງິນທຶນໃຫ້ໂດຍກົມຊ່ວຍເຫລືອເດັກນ້ອຍ,ຊາວໜຸ່ມ, ແລະຄອບຄົວ, ໂຄງການອູ້ມຊູແຕ່ເລີ້ມແຣກສຳລັບເດັກທາຣົກ ແລະເດັກກຳລັງຮຽນຍ່າງ

Washington State Department of
CHILDREN, YOUTH & FAMILIES

## ການຜັນປ່ຽນຕໍ່ມາແມ່ນຫຍັງ?

ເມື່ອລູກຂອງທ່ານຮອດອາຍຸສາມຂວບແລ້ວ, ການບໍລິການເຂົ້າແຊກແຊງແຕ່ເລີ່ມຕົ້ນຈົບລົງ ແລະ ການບໍລິການ ແລະ ການອູ້ມຊູແນວໃຫມ່ອາດຈະມີໄວ້ໃຫ້. ການ ດຳເນີນການຂອງການປ່ຽນແປງອັນນີ້ແມ່ນອັນນຶ່ງຂອງການຜັນປ່ຽນຕໍ່ມາຫລາຍໆຢ່າງທີ່ອາດຈະເກີດຂຶ້ນສຳລັບລູກຂອງທ່ານ ແລະ ຄອບຄົວຕະລອດທົ່ວຊີວິດຂອງທ່ານ.

ຫົກຫາເກົ້າເດືອນກ່ອນວັນເກີດປີທີສາມຂອງລູກຂອງທ່ານ, ທ່ານຈະເລີ່ມຕົ້ນທີ່ຈະເຮັດວຽກນຳຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ຂອງທ່ານ ແລະ ຄະນະທີມງານຂອງທ່ານເພື່ອຈະວາງແຜນສຳລັບການຜັນປ່ຽນມາເປັນທາງເລືອກເອົາໂຮງຮຽນ ຫລື ໂຄງການບໍລິການແນວອື່ນ. ຄອບຄົວ ແລະ ຜູ້ໃຫ້ການບໍລິການຈະເບິ່ງຕາມການດຳເນີນການນຳກັນໃນທາງເດີນທີ່ນຳພາໄປສູ່ການປະຊຸມກັນເຣື່ອງການຜັນປ່ຽນຕໍ່ມາ.

## ຈຸດປະສົງຂອງການປະຊຸມເຣື່ອງການຜັນປ່ຽນຕໍ່ມາແມ່ນຫຍັງ?

ໃນຣະຫວ່າງການປະຊຸມ IFSF, ໃບຫນັງສືແຜນການຈະຖືກເຮັດອອກມາໂດຍທ່ານ ແລະ ຄະນະທີມງານເຂົ້າແຊກແຊງແຕ່ເລີ່ມຕົ້ນຂອງທ່ານເພື່ອຈະຊ່ວຍຊີ້ນຳທ່ານໃຫ້ຜ່ານຜ່າການດຳເນີນການຜັນປ່ຽນຕໍ່ມາ.

ກົດຫມາຍການສຶກສາສຳລັບບຸກຄົນຜູ້ທີ່ມີຄວາມເສັຽອົງຄະ (IDEA) Part C ບົ່ງໃຫ້ມີໃບຫນັງສືແຜນການສຳລັບການຜັນປ່ຽນຕໍ່ມາໃນວັນເກີດປີທີສາມຂອງເດັກນ້ອຍ.

## ພວກເຮົາຈະເລີ້ມຕົ້ນການວາງແຜນສຳລັບການຜັນປ່ຽນຕໍ່ມາເມື່ອໃດ?

**ຫົກຫາເກົ້າເດືອນກ່ອນວັນເກີດປີທີສາມຂອງລູກຂອງທ່ານ:**

ການວາງແຜນສຳລັບການຜັນປ່ຽນຕໍ່ມາເລີ້ມຕົ້ນ. FRC ຂອງທ່ານຈະອຳນວຍຄວາມສະດວກການຕິດຕໍ່ຣະຫວ່າງທ່ານ ແລະ ຫມວດໂຮງຮຽນຂອງທ່ານ ຫລື ໂຄງການທີ່ຕັ້ງຢູ່ຕາມຊຸມນຸມຊົນ ເພື່ອຈະເລີ້ມຕົ້ນການວາງແຜນສຳລັບການຜັນປ່ຽນຕໍ່ມາຂອງລູກຂອງທ່ານໃນເວລາອາຍຸສາມປີ.

**ຢ່າງຫນ້ອຍສາມເດືອນກ່ອນວັນເກີດປີທີສາມຂອງລູກຂອງທ່ານ, ການປະຊຸມການວາງແຜນຜັນປ່ຽນຕໍ່ມາຈະຖືກຈັດຂື້ນ:**

ທ່ານຈະພົບກັບຜູ້ຕາງຫນ້າຂອງຫມວດໂຮງຮຽນຊຶ່ງເປັນສ່ວນນຶ່ງຂອງການປະຊຸມກັນ. ເຂົາເຈົ້າຈະອະທິບາຍວ່າແມ່ນຫຍັງຈະເກີດຂຶ້ນເພື່ອຈະພິຈາຣະນາເບິ່ງວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບການບໍລິການດ້ານການສຶກສາພິເສດກ່ອນເຂົ້າໂຮງຮຽນອະນຸບານ.

ຖ້າຫາກວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບການບໍລິການດ້ານການສຶກສາພິເສດສຳລັບວັຍເດັກແຕ່ເລີ້ມຕົ້ນ, ຕາມທີ່ ຖືກພິຈາຣະນາອອກມາໂດຍຫມວດໂຮງຮຽນ,ການບໍລິການຈະຖືກເອົາໃຫ້ໂດຍຜ່ານໂຄງການສຶກສາສ່ວນບຸກຄົນ (IEP)

ການປະຊຸມນຳຜູ້ຕາງຫນ້າຂອງຫມວດໂຮງຮຽນຈະບໍ່ຖືກນັດຖ້າຫາກວ່າທ່ານບໍ່ປະສົງທີ່ຈະຮັບເອົາການບໍລິການດ້ານການສຶກສາພິເສດກ່ອນອະນຸບານ.

## ແຜນການຜັນປ່ຽນຕໍ່ມາແມ່ນຫຍັງ?

ແຜນການຜັນປ່ຽນຕໍ່ມາຊີ້ບອກວ່າທ່ານ, FRC ຂອງທ່ານ, ແລະ ຄະນະທີມງານເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງທ່ານຈະຊ່ວຍເຫລືອໄດ້ແນວໃດເມື່ອລູກຂອງທ່ານ ແລະ ຄອບຄົວຍ້າຍກາຍການບໍລິການເຂົ້າແຊກແຊງແຕ່ເລີ້ມຕົ້ນໃນເວລາອາຍຸສາມປີ. ແຜນການຈະບັນຣະຍາຍວ່າການອູ້ມຊູແນວໃດແດ່,ຂັ້ນຕອນແລະການບໍລິການທີ່ຈະຕ້ອງການເມື່ອລູກ ຂອງທ່ານເຂົ້າໃນໂຄງການສຳລັບການສຶກສາພິເສດຂອງ ຫມວດໂຮງຮຽນທ້ອງຖິ່ນຂອງທ່ານ ຫລື ການບໍລິການ ຕັ້ງຢູ່ຕາມຊຸມນຸມຊົນ, ຫລື ອອກຈາກການບໍລິການ ແລະ ການອູ້ມຊູຍ້ອນວ່າລູກຂອງທ່ານບໍ່ມີເງື່ອນໄຂໄດ້ຮັບຕໍ່ໄປອີກແລ້ວ.

## ແມ່ນຫຍັງຕໍ່ມາສຳລັບລູກຂອງຂ້ອຍ?

**ການອອກແບບແຜນການຜັນປ່ຽນຕໍ່ມາຂອງລູກຂອງຂ້ອຍ:**

ທ່ານ ແລະ ຄະນະທີມງານເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງທ່ານຈະເຮັດວຽກນຳກັນເພື່ອຈະອອກແບບແຜນການ. ຄະນະທີມງານລວມເອົາທ່ານ, FRC ຂອງທ່ານ, ບຸກຄົນຜູ້ທີ່ເຮັດວຽກນຳລູກຂອງທ່ານດຽວນີ້, ບຸກຄົນອື່ນໆທີ່ທ່ານ ປະສົງຢາກໃຫ້ກ່ຽວພັນນຳ ແລະ ບຸກຄົນຜູ້ທີ່ອາດຈະກ່ຽວພັນນຳລູກຂອງທ່ານໃນອະນາຄົດ. ຄະນະທີມງານຈະເບິ່ງໃນຄວາມຄືບຫນ້າ ແລະ ຄວາມຕ້ອງການຂອງລູກຂອງທ່ານ. FRC ປະສານງານການອອກ ແບບຂອງແຜນການຜັນປ່ຽນຕໍ່ມາ.

### ການບໍລິການແນວໃດແດ່ຈະມີໄວ້ໃຫ້ສຳລັບລູກຂອງຂ້ອຍຫລັງຈາກການຜັນປ່ຽນຕໍ່ມາເມື່ອເວລາອາຍຸສາມປີ?

ອັນນີ້ຂື້ນນຳວ່າລູກຂອງທ່ານຕ້ອງການການບໍລິການດ້ານການສຶກສາພິເສດໃນວັຍເດັກແຕ່ເລີ້ມຕົ້ນຫລືບໍ່. ຫມວດໂຮງຮຽນຂອງທ່ານຈະພິຈາຣະນາເບິ່ງວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບການບໍລິການດ້ານການສຶກສາພິເສດໃນວັຍເດັກແຕ່ເລີ້ມຕົ້ນຫລືບໍ່. ຖ້າຫາກວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບ, ທາງເລືອກຂອງການຈັດແຈງການບໍລິການຫລາຍໆຢ່າງອາດຈະມີໄວ້ໃຫ້, ເຊັ່ນວ່າໂຄງການຕາມຊຸມນຸມຊົນ, ໂຄງການ Head Start, ໂຄງການການສຶກສາພິເສດໃນວັຍເດັກແຕ່ເລີ້ມຕົ້ນ ແລະການຊ່ວຍເຫລືອ (ECEAP), ໂຄງການຊ່ວຍຢູ່ຕາມເຮືອນ ຫລື ໂຮງຮຽນ.ການສຶກສາພິເສດ ຫລື ການບໍລິການທີ່ກ່ຽວຂ້ອງນຳຈະຖືກເອົາໃຫ້ໂດຍຜ່ານໂຄງການການສຶກສາສ່ວນບຸກຄົນ(IEP). FRC ຈະປະສານງານການປະຊຸມການວາງແຜນການຜັນປ່ຽນຕໍ່ມາ. ຫມວດໂຮງຮຽນຈະຈັດການປະຊຸມຂື້ນເພື່ອຈະອອກແບບແຜນ IEPຂອງລູກຂອງທ່ານ.

ທ່ານຈະຮ້ອງຂໍໃຫ້ FRC ຂອງທ່ານຖືກເຊີນມາຮ່ວມກອງປະຊຸມ IEP ນຳທ່ານ.ທ່ານສາມາດພາຫມູ່ມານຳກໍໄດ້,ສະມາຊິກຄອບຄົວຫລືສະມາຊິກຊຸມນຸມຊົນຕາມໃຈເລືອກຂອງທ່ານມານຳທ່ານເພື່ອຈະອູ້ມຊູໃນກອງປະຊຸມ IEP. ຖ້າຫາກວ່າຜູ້ຈັດການເອກສານຂອງພະແນກຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ (DDD) ຫລືຜູ້ປະສານງານຄວາມຕ້ອງການປິ່ນປົວສຸຂະພາບພິເສດ (CSHCN), ທ່ານຢາກຈະເຊີນເຂົາເຈົ້າມານຳກໍໄດ້. ກອງປະຊຸມ IEP ຕ້ອງເກີດຂື້ນກ່ອນວັນເກີດປີທີສາມຂອງລູກຂອງທ່ານແລະ IEP ຕ້ອງມີໄວ້ຕຽມພ້ອມກ່ອນວັນເກີດປີທີສາມຂອງລູກຂອງທ່ານ.ກອງປະຊຸມ IEP ໄດ້ຖືກນັດໄວ້ປະຈຳປີ. ເຖິງຢ່າງໃດກໍຕາມ,ທ່ານສາມາດຮ້ອງຂໍເອົາກອງປະຊຸມ IEP ໄດ້ໃນທຸກໆເວລາທີ່ທ່າ ນຫລືພະນັກງານຂອງໂຮງຮຽນຮູ້ສຶກວ່າມັນມີຄວາມຕ້ອງການທີ່ຈະເວົ້າລົມເຣື່ອງໂຄງການຂອງລູກຂອງທ່ານ.

### ແມ່ນຫຍັງຈະເກີດຂື້ນຖ້າຫາກວ່າລູກຂອງຂ້ອຍບໍ່ມີເງື່ອນໄຂໄດ້ຮັບການບໍລິການດ້ານການສຶກສາພິເສດກ່ອນເຂົ້າໂຮງຮຽນອະນຸບານ?

ຖ້າຫາກວ່າລູກຂອງທ່ານບໍ່ມີເງື່ອນໄຂໄດ້ຮັບການບໍລິການດ້ານການສຶກສາພິເສດກ່ອນເຂົ້າໂຮງຮຽນອະນຸບານ, FRC ຂອງທ່ານຈະເຮັດວຽກນຳທ່ານເພື່ອຈະຊີ້ບອກທາງອອກທີ່ອາດເປັນໄປໄດ້ທາງອື່ນໆຊຶ່ງມີໄວ້ໃຫ້ສຳລັບລູກຂອງທ່ານ, ເຊັ່ນວ່າໂຄງການ Head Start, ECEAP ຫລື ໂຄງການຕາມຊຸມນຸມຊົນອື່ນໆ.

## ບົດບາດຂອງພວກເຮົາໃນການດຳເນີນການຜັນປ່ຽນຕໍ່ມາແມ່ນຫຍັງ?

**ຄຳຊີ້ນຳກ່ຽວກັບວ່າທ່ານສາມາດຊ່ວຍເຫລືອລູກຂອງທ່ານ ແລະ ຄອບຄົວທຳການຜັນປ່ຽນຕໍ່ມາໃຫ້ຣາບຣື່ນສະດວກໄດ້ແນວໃດ:**

- ເຂົ້າຮ່ວມໃນການປະຊຸມໂດຍການເວົ້າກ່ຽວກັບສິ່ງ ທີ່ທ່ານຕ້ອງ ການສຳລັບລູກຂອງທ່ານ.
- ຈົດບັນທຶກໃນເວລາການປະຊຸມ.
- ຄົ້ນຄວ້າຊອກຫາບ່ອນຊ່ວຍເຫລືອ ແລະ ການບໍລິການ.
- ເກັບຮັກສາປື້ມບັນທຶກກ່ຽວກັບກິຈກັມການເຄື່ອນໄຫວ ແລະ ຄວາມສົນໃຈຂອງລູກຂອງທ່ານ. ລວມເອົາໃບ ລາຍເກີດຂອງລູກຂອງທ່ານ, ບັນທຶກການສັກຢາກັນໂຣກ, ບັນທຶກ ພະຍາບານ, ຮູບພາບ, ການຕີຣາຄາ, ການປະ ເມີນຜົນ, ແລະ IFSPs ຜ່ານມາ. ຮູບພາບຂອງລູກຂອງ ທ່ານຊ່ວຍໃຫ້ເຫັນຂໍ້ມູນຄວາມຈິງ ແລະ ຣາຍຣະອຽດເປັນສ່ວນຕົວ.
- ແມ່ນຫຍັງແດ່ຈະຊ່ວຍເຫລືອໄດ້ຫລາຍເພື່ອຈະອູ້ມຊູສະນັບສະນູນສຳລັບລູກຂອງທ່ານ? ທ່ານຮູ້ຈັກຄວາມຕ້ອງການຂອງເຂົາເຈົ້າໄດ້ດີທີ່ສຸດ. ຮູ້ຈັກວ່າຈະໄດ້ຫຍັງແດ່ຈາກລູກຂອງທ່ານ ແລະເຮັດວຽກນຳຫມວດໂຮງຮຽນ ແລະ ຄະນະທີມງານ IEP ເພື່ອຈະເອົາການບໍລິການການເຫລົ່ານີ້ມາສຳລັບລູກຂອງທ່ານ.

## ຂັ້ນຕໍ່ໄປຂອງຂ້ອຍຫລັງຈາກການຜັນປ່ຽນຕໍ່ມາແມ່ນຫຍັງ?

າມເບິ່ງວ່າມັນມີກຸ່ມອູ້ມຊູຄອບຄົວຫລືບໍ່, ສາມະຄົມພໍ່ແມ່ນາຍຄູນັກຮຽນທ້ອງຖິ່ນ (PTSA) ຫລື ສະພາແນະນຳ ພໍ່ແມ່ສຳລັບການສຶກສາພິເສດ (SEPAC) ຢູ່ໃນເຂດຫມູ່ບ້ານຂອງທ່ານ. ຖາມເບິ່ງວ່າຫມວດໂຮງຮຽນ ມີພະນັກງານບໍລິການຄອບຄົວ ຫລື ພະນັກງານສັງຄົມຜູ້ທີ່ສາມາດຊ່ວຍເຫລືອທ່ານຖ້າຫາກວ່າທ່ານມີຄວາມຂ້ອງໃຈ. ຈຳໄວ້ວ່າທ່ານ, ໃນຖານະເປັນພໍ່ແມ່, ອາດຈະໄດ້ຮັບຜົນປະໂຍດຈາກການອູ້ມຊູສຳລັບຕົວທ່ານເອງ, ລວມທັງສຳລັບລູກຂອງທ່ານອີກ, ໃນເມື່ອເວລາຄອບຄົວຂອງທ່ານຍ້າຍຜ່ານຜ່າການດຳເນີນການຜັນປ່ຽນຕໍ່ມາ.

## ຣາຍຣະອຽດອື່ນໆແນວໃດແດ່ທີ່ພວກເຮົາຕ້ອງການ?

ຖ້າຫາກວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບການບໍລິການຈາກພະແນກ DDD ໃນປັດຈຸບັນນີ້ຢູ່, ເງື່ອນໄຂຮັບການຊ່ວຍເຫລືອສຳລັບການບໍລິການຕ້ອງຖືກພິຈາຣະນາເບິ່ງໃຫມ່ກ່ອນທີ່ລູກຂອງທ່ານຈະຮອດອາຍຸສີ່ປີ. ມັນສຳຄັນສຳລັບທ່ານທີ່ຈະແລກປ່ຽນຣາຍຣະອຽດກ່ຽວກັບການປະເມີນຜົນເຣື່ອງການເຂົ້າແຊກແຊງແຕ່ເລີ້ມຕົ້ນ, ຣາຍຣະອຽດກ່ຽວກັບການຜັນປ່ຽນຕໍ່ມາ ແລະ ຣາຍຣະອຽດກ່ຽວກັບການຕີຣາຄາການປະເມີນຜົນຂອງໂຮງຮຽນໃນຣະຫວ່າງການດຳເນີນການຜັນປ່ຽນຕໍ່ມານຳພະແນກ DDD. **ຄຳຍິນຍອມຂອງທ່ານທີ່ຈະເປີດເຜີຍຣາຍຣະອຽດອັນນີ້ໃຫ້ແກ່ ພະແນກ DDD ສາມາດຖືກເກັບກຳເອົາມາໄດ້ຈາກຫມວດໂຮງຮຽນໃນເວລາປະຊຸມການວາງແຜນການຜັນປ່ຽນຕໍ່ມາ.** ຖ້າຫາກວ່າຣາຍຣະອຽດເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບຕໍ່ໄປແມ່ນບໍ່ໄດ້ຮັບ, ລູກຂອງທ່ານຈະຖືກເອົາອອກຈາກການບໍລິການຂອງພະແນກ DDD ໃນເວລາ ອາຍຸສີ່ປີ.

## ຂ້ອຍຈະສາມາດໄປໃສເພື່ອຄວາມຊ່ວຍເຫລືອຫລື ລາຍລະອຽດເພີ້ມເຕີມ?



Department of Department of Children, Youth, and Families Early Support for Infants and Toddlers (ESIT) ຊີ້ນຳລະບົບທົ່ວລັດຂອງການບໍລິການເຂົ້າແຊກແຊງນຳຂອງ IDEA ພາກ C.

(360) 725-3500

**www.dcyf.wa.gov**

ເພື່ອລາຍລະອຽດເພີ້ມເຕີມແລະການສົ່ງຕໍ່ໄປຫາຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ຕິດຕໍ່ຫາ: Help me grow Washington ສຳລັບຊື່ຂອງ ຟໄຈ໋ ຢູ່ໃນເຂດທ້ອງຖິ່ນຂອງທ່ານ.

1-800-322-2588

Washington State Fathers Network ຢູ່ທີ່ Kindering Center. ສະນັບສະນູນຊ່ວຍເຫລືອແລະໃຫ້ການອູ້ມຊູແລະແຫລ່ງຊ່ວຍເຫລືອສຳລັບຜູ2ຊາຍທຸກໆຄົນແລະຄອບຄົວຂອງເຂົາເຈົ້າຜູ້ທີ່ມີເດັກນ້ອຍທີ່ມີຄວາມຕ້ອງການພິເສດ.

(425) 653-4286

**www.fathersnetwork.org**

PAVE ແມ່ນສູນກາງຝຶກຝົນແລະລາຍລະອຽດທົ່ວລັດທີ່ໃຫ້ຄວາມຊ່ວຍເຫລືອແກ່ຄອບຄົວທີ່ມີເດັກນ້ອຍທີ່ມີຄວາມເສັຽອົງຄະ,ອາຍຸແຕ່ກຳເນີດໄປຫາການເປັນຜູ້ໃຫຍ່.

1-800-572-7368 (800-5 PARENT)

**www.wapave.org**

Washington State Parent to Parent ເປັນສາຍງານຂອງພໍ່ແມ່ທົ່ວລັດທີ່ເອົາການອູ້ມຊູດ້ານຈິດໃຈແລະລາຍລະອຽດໃຫ້ແກ່ພໍ່ແມ່ຜູ້ທີ່ມີເດັກນ້ອຍທີ່ມີຄວາມເສັຽອົງຄະຫລືການຊັກຊ້າໃນການຈະເລີນເຕີບໂຕ.

1-800-821-5927

**www.arcwa.org/parent-to-parent**

Arc of Washington State ສົ່ງເສີມການສຶກສາ, ສຸຂະພາບ,ການກຸ້ມຕົນເອງ,ການສະນັບສະນູນຕົນເອງ, ການລວມເຂົ້າໃສ່ນຳ,ແລະທາງເລືອກຂອງບຸກຄົນທີ່ມີຄວາມ ເສັຽອົງຄະດ້ານການຈະເລີນເຕີບໂຕແລະຄອບຄົວຂອງເຂົາເຈົ້າ.

1-888-754-8798

**www.arcwa.org**

Office of Superintendent of Public Instruction ມີແວບໄຊທ໌ຊ່ວຍເຫລືອໄດ້ຫລາຍສຳລັບຄອບຄົວຂອງເດັກນ້ອຍຜູ້ທີ່ໄດ້ຮັບການບໍລິການດ້ານການສຶກສາພິເສດແລະການບໍລິການທີ່ກ່ຽວພັນນຳຢູ່ທີ່: **www.K12.wa.us/SpecialEd/Families/default.aspx**

**The Washington State Department of Children, Youth & Families Early Support for Infants and Toddlers**

PO Box 40970
Olympia WA 98504-0970
ແຟກຊ: (360) 725-4925
ສຽງເວົ້າ: (360) 725-3500
**www.dcyf.wa.gov/services/child-development-supports/esit**

*ການແບ່ງແຍງຊົນຊັ້ນວັນນະໄດ້ຖືກຫວງຫ້າມຢູ່ໃນໂຄງການແລະການເຄື່ອນໄຫວທຸກໆຢ່າງ.ຈະບໍ່ມີຄົນໃດຈະຖືກຍົກເວັ້ນໂດຍອີງຕາມພື້ນຖານຂອງຜິວພັນ,ສີສັນ,ສາສະນາ,ລັດທິ, ເຊື້ອຊາດດັ້ງເດີມ,ເພດ,ອາຍຸຫລືຄວາມເສັຽອົງຄະ..*

*ຖ້າຫາກວ່າທ່ານຢາກໄດ້ໂກປີ້ຂອງເອກສານອັນນີ້ໃນແບບຮູບຮ່າງຫລືພາສາອື່ນ,ກະຣຸນາຕິດຕໍ່ຫາ DCYF Constituent Relations (1-800-723-4831 | 360-902-8060, **ConstRelations@dcyf.wa.gov**).*

DCYF PUBLICATION FS_0004 LA | DEL 11-013 LA (01-2020)